ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງພະລັງງານແລະບໍ່ແຮ່

ເລກທີ 0481 /ພບ

ນະຄອນຫຼວງວຽງຈັນ, ວັນທີ 20 04 12

# ຂໍ້ຕົກລົງ

## ຂອງລັດຖະມົນຕີ ວ່າການ ກະຊວງພະລັງງານ ແລະ ບໍ່ແຮ່

## ວ່າດ້ວຍ ການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

- ອີງຕາມກົດໝາຍ ວ່າດ້ວຍ ແຮ່ທາດ ສະບັບເລກທີ 02 /ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມກົດໝາຍ ວ່າດ້ວຍ ວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມກົດໝາຍ ວ່າດ້ວຍ ອຸດສາຫະກຳປຸງແຕ່ງ ສະບັບເລກທີ 01/99/ສພຊ, ລົງວັນທີ 3 ເມສາ 1999;
- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 114/ນຍ, ລົງວັນທີ 6/4/2011 ວ່າດ້ວຍ ການນຳເຂົ້າ ແລະ ສົ່ງອອກສິນຄ້າ;
- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 372/ນຍ, ລົງວັນທີ 21/10/2011 ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງພະລັງງານ ແລະ ບໍ່ແຮ່.

**ກະຊວງພະລັງງານ ແລະ ບໍ່ແຮ່ ອອກບົດແນະນຳ:**

## ໝວດທີ I

## ຂໍ້ກຳນົດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການອອກໃບອະນຸຍາດ, ການຄຸ້ມຄອງການຊື້-ຂາຍ, ສົ່ງອອກ, ນຳເຂົ້າ, ການເຄື່ອນຍ້າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ລວມທັງການປະຕິບັດພັນທະຄ່າຊັບພະຍາກອນ ຢູ່ໃນ ສປປ ລາວ ແລະ ການຊື້-ຂາຍແຮ່ທາດ ລະຫວ່າງປະເທດ ເພື່ອເຮັດໃຫ້ການຊື້-ຂາຍແຮ່ທາດມີການຄຸ້ມຄອງທີ່ເຂັ້ມງວດ ແລະ ມີປະສິດທິຜົນ.

**ມາດຕາ 2. ນິຍາມ**

- ແຮ່ທາດ ໃນຂໍ້ຕົກລົງສະບັບນີ້ ໝາຍເຖິງແຮ່ທີ່ໄດ້ຮັບການປຸງແຕ່ງຍົກຄຸນນະພາບເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ;
- ຜະລິດຕະພັນແຮ່ທາດເຄິ່ງສຳເລັດຮູບ ແມ່ນແຮ່ທາດທີ່ຖືກປຸງແຕ່ງຍົກລະດັບຄຸນນະພາບຂັ້ນຕົ້ນ ຫຼື ຂັ້ນກາງ.
- ຜະລິດຕະພັນແຮ່ທາດສຳເລັດຮູບ ແມ່ນຜະລິດຕະພັນສຸດທ້າຍຂອງອຸດສາຫະກຳບໍ່ແຮ່.

ການຂາຍແຮ່ທາດ ຕາມສັນຍາສຳປະທານ ໝາຍເຖິງ ການຂາຍແຮ່ທາດໂດຍນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຂຸດຄົ້ນແຮ່ທາດຈາກລັດຖະບານ ຕາມທີ່ກຳນົດໄວ້ໃນມາດຕາ 25 ແລະ 26 ຂອງກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 02/ສພຊ, ລົງວັນທີ 20 ທັນວາ 2011.

ທຸລະກິດກ່ຽວກັບການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ໝາຍເຖິງ ການດຳເນີນທຸລະກິດຂອງບຸກຄົນ ຫຼື ນິຕິບຸກຄົນພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບອະນຸຍາດຕາມດຳລັດສະບັບນີ້. ດຳເນີນການຊື້-ຂາຍແຮ່ທາດ ໂດຍສອດຄ່ອງກັບມາດຕາ 25 ຂອງກົດໝາຍ ວ່າດ້ວຍແຮ່ທາດສະບັບເລກທີ 02/ສພຊ, ລົງວັນທີ 20 ທັນວາ 2011.

ການນຳແຮ່ທາດເຂົ້າມາປຸງແຕ່ງພາຍໃນປະເທດ ໝາຍເຖິງ ການນຳເຂົ້າແຮ່ທາດ ຈາກຕ່າງປະເທດຂອງບຸກຄົນ ຫຼື ນິຕິບຸກຄົນທັງພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບອະນຸຍາດຕາມຂໍ້ຕົກລົງສະບັບນີ້ ເພື່ອນຳເຂົ້າແຮ່ທາດຈາກຕ່າງປະເທດມາປຸງແຕ່ງດ້ວຍຕົນເອງ ຫຼື ຈຳໜ່າຍໃຫ້ຜູ້ຜະລິດພາຍໃນທີ່ໄດ້ຮັບອະນຸຍາດໃຫ້ປຸງແຕ່ງແຮ່ທາດເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບເພື່ອຈຳໜ່າຍພາຍໃນ ຫຼື ສົ່ງອອກຕ່າງປະເທດ.

### ມາດຕາ 3. ຂອບເຂດການນຳໃຊ້

ຂໍ້ຕົກລົງ ສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການຂຸດຄົ້ນ, ເຄື່ອນຍ້າຍ, ການປຸງແຕ່ງຜະລິດຕະພັນແຮ່ທາດ ພາຍໃຕ້ສັນຍາສຳປະທານ, ກິດຈະການກ່ຽວກັບການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ, ການນຳເຂົ້າ, ການສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ.

## ໝວດທີ II
## ການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

### ມາດຕາ 4. ປະເພດການດຳເນີນກິດຈະການ ການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

ການດຳເນີນກິດຈະການ ການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ປະກອບດ້ວຍສອງປະເພດດັ່ງນີ້:

1. ການຊື້-ຂາຍແຮ່ທາດໂດຍນິຕິບຸກຄົນທີ່ມີໃບອະນຸຍາດຂຸດຄົ້ນແຮ່ທາດ ຕາມສັນຍາສຳປະທານ ທີ່ໄດ້ເຊັນກັບລັດຖະບານ;
2. ການຊື້-ຂາຍແຮ່ທາດຂອງຜູ້ໄດ້ຮັບອະນຸຍາດສະເພາະເພື່ອດຳເນີນກິດຈະການ ຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຕາມຂໍ້ຕົກລົງສະບັບນີ້.

### ມາດຕາ 5. ເງື່ອນໄຂ ການຂໍ ແລະ ການອອກໃບອະນຸຍາດການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຂອງຜູ້ຖືໃບອະນຸຍາດຂຸດຄົ້ນແຮ່ທາດ ພາຍໃຕ້ສັນຍາສຳປະທານ

ຜູ້ໄດ້ຮັບໃບອະນຸຍາດຂຸດຄົ້ນແຮ່ທາດ ພາຍໃຕ້ສັນຍາສຳປະທານ ແມ່ນຈະໄດ້ຮັບໃບອະນຸຍາດຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ແບບອັດຕະໂນມັດ ຕາມການສະເໜີຂອງຕົນ ຊຶ່ງຕ້ອງມີເງື່ອນໄຂດັ່ງນີ້:

1. ມີໃບອະນຸຍາດຂຸດຄົ້ນແຮ່ທາດ ອອກໃຫ້ໂດຍກະຊວງພະລັງງານ ແລະ ບໍ່ແຮ່;
2. ມີສັນຍາຊື້-ຂາຍແຮ່ທາດ ກັບຜູ້ທີ່ໄດ້ຮັບສິດຂຸດຄົ້ນແຮ່ທາດ ພາຍໃຕ້ສັນຍາສຳປະທານ, ໃນກໍລະນີທີ່ຕ້ອງການຊື້ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດຈາກໂຄງການອື່ນ;
3. ມີໃບທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍ;
4. ມີສະຖານທີ່ ຫຼື ສາງເກັບມ້ຽນແຮ່ທາດທີ່ໄດ້ມາດຕະຖານທາງດ້ານເຕັກນິກ.

ນອກຈາກເງື່ອນໄຂ ຕາມເອກະສານຂ້າງເທິງແລ້ວ ຜູ້ຖືໃບອະນຸຍາດຂຸດຄົ້ນພາຍໃຕ້ສັນຍາສຳປະທານ ຕ້ອງປະກອບເອກະສານຕົ້ນຕໍດັ່ງນີ້:

1. ຈົດໝາຍແຈ້ງຈຳນວນ, ຄຸນລັກສະນະ ແລະ ປະເພດແຮ່ທີ່ຕົນຕ້ອງການຊື້-ຂາຍ;
2. ຄຳຮ້ອງຂໍອະນຸຍາດສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ໂດຍຄັດຕິດໃບອະນຸຍາດຂຸດຄົ້ນແຮ່ທາດ;
3. ສັນຍາຂາຍແຮ່ທາດ ກັບຜູ້ຊື້ຢູ່ປາຍທາງ;
4. ໃບຢັ້ງຢືນຜົນການວິໄຈເບື້ອງຕົ້ນ ທີ່ຮັບຮອງໂດຍກົມທໍລະນີສາດ ແລະ ແຮ່ທາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ມາດຕາ 6. ການຊື້-ຂາຍແຮ່ທາດໂດຍຜູ້ໄດ້ຮັບອະນຸຍາດສຳປະທານ

ເມື່ອຜູ້ຍື່ນຄຳຮ້ອງທີ່ໄດ້ຮັບອະນຸຍາດສຳປະທານຂໍຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຍື່ນເອກະສານຄົບຖ້ວນແລ້ວ, ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາ ອອກໃບອະນຸຍາດ ໃຫ້ຜູ້ຍື່ນຄຳຮ້ອງບົນພື້ນຖານຄວາມຖືກຕ້ອງຂອງການປະກອບເອກະສານ ພາຍໃນ ສິບຫ້າ ວັນລັດຖະການ.

ໃນກໍລະນີກະຊວງພະລັງງານ ແລະ ບໍ່ແຮ່ ຕົກລົງບໍ່ອອກໃບອະນຸຍາດໃຫ້ຜູ້ຍື່ນຄຳຮ້ອງ, ກໍ່ຕ້ອງຕອບຜູ້ຍື່ນຄຳຮ້ອງພ້ອມດ້ວຍເຫດຜົນຂອງການປະຕິເສດຢ່າງເປັນລາຍລັກອັກສອນ.

ອາຍຸຂອງໃບອະນຸຍາດດຳເນີນການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ກຳນົດເປັນ 3 ປະເພດ:

- ຜູ້ທີ່ມີເຂດສຳປະທານຂຸດຄົ້ນເປັນຂອງຕົນເອງ ແມ່ນຕາມອາຍຸໃບອະນຸຍາດຂຸດຄົ້ນ;
- ຜູ້ທີ່ມີໂຮງງານປຸງແຕ່ງແລະຫຼໍ່ຫຼອມແຮ່ ແມ່ນອີງຕາມອາຍຸໃບອະນຸຍາດໂຮງງານ;
- ສຳລັບຜູ້ທີ່ດຳເນີນກິດຈະການສະເພາະຊື້-ຂາຍແຮ່ທາດແລະຜະລິດຕະພັນແຮ່ທາດແມ່ນມີອາຍຸ 1 ປີ ແລະ ສາມາດ ຕໍ່ໄດ້ເປັນແຕ່ລະປີ ຕາມເງື່ອນໄຂທີ່ໄດ້ກ່າວໄວ້ຂ້າງເທິງນີ້.

ມາດຕາ 7. ເງື່ອນໄຂການຂໍ ແລະ ການອອກໃບອະນຸຍາດໃຫ້ແກ່ຜູ້ດຳເນີນກິດຈະການສະເພາະແຕ່ການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງໃນການຂໍໃບອະນຸຍາດດຳເນີນກິດຈະການສະເພາະແຕ່ການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຕ້ອງຍື່ນຄຳຮ້ອງຂອງຕົນຕໍ່ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ຕ້ອງມີເງື່ອນໄຂ ແລະ ປະກອບເອກະສານຕົ້ນຕໍດັ່ງນີ້:

1. ໃບທະບຽນວິສາຫະກິດ ສຳລັບການດຳເນີນທຸລະກິດດ້ານການຄ້າທີ່ຖືກຕ້ອງຕາມກົດໝາຍ;
2. ໃບທະບຽນອາກອນ;
3. ສັນຍາຊື້ແຮ່ທາດ ກັບເຈົ້າຂອງສິດສຳປະທານ;
4. ສັນຍາຂາຍແຮ່ທາດກັບຜູ້ຊື້ຢູ່ປາຍທາງ;
5. ມີສະຖານທີ່ ຫຼື ສາງເກັບມ້ຽນແຮ່ທາດທີ່ໄດ້ມາດຕະຖານທາງດ້ານເຕັກນິກ.

ມາດຕາ 8. ການອອກໃບອະນຸຍາດຊື້-ຂາຍແຮ່ທາດ

ເມື່ອຜູ້ຍື່ນຄຳຮ້ອງ ເພື່ອຂໍດຳເນີນກິດຈະການ ສະເພາະແຕ່ຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຍື່ນເອກະສານຄົບຖ້ວນແລ້ວ, ກະຊວງພະລັງງານ ແລະ ບໍ່ແຮ່ຈະພິຈາລະນາອອກໃບອະນຸຍາດ ໃຫ້ຜູ້ຍື່ນຄຳຮ້ອງບົນພື້ນຖານຄວາມຖືກຕ້ອງຂອງການປະກອບເອກະສານ ພາຍໃນ ສິບ ວັນລັດຖະການ.

ໃນກໍລະນີກະຊວງພະລັງງານ ແລະ ບໍ່ແຮ່ ຕົກລົງບໍ່ອອກໃບອະນຸຍາດໃຫ້ຜູ້ຍື່ນຄຳຮ້ອງ, ກໍ່ຕ້ອງຕອບຜູ້ຍື່ນຄຳຮ້ອງ ພ້ອມດ້ວຍເຫດຜົນຂອງການປະຕິເສດຢ່າງເປັນລາຍລັກອັກສອນ.

ໃບອະນຸຍາດດຳເນີນການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ມີອາຍຸ ໜຶ່ງປີ ແລະ ສາມາດຕໍ່ໄດ້ເປັນແຕ່ລະປີ ຕາມເງື່ອນໄຂທີ່ໄດ້ກ່າວໄວ້ຂ້າງເທິງນີ້.

ມາດຕາ 9. ການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດຜ່ານດິນແດນຂອງ ສປປ ລາວ ເພື່ອສົ່ງໄປປະເທດທີ່ສາມ

ຜູ້ດຳເນີນທຸລະກິດມີຈຸດປະສົງຈະນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດຜ່ານດິນແດນຂອງ ສປປ ລາວ ເພື່ອສົ່ງໄປປະເທດທີ່ສາມ ແມ່ນປະຕິບັດຕາມລະບຽບການຂອງກະຊວງອຸດສາຫະກຳແລະການຄ້າ.

ມາດຕາ 10. ລາຄາການຊື້-ຂາຍແຮ່ທາດ ຫຼື ຜະລິດຕະພັນແຮ່ທາດ

ລາຄາການຊື້-ຂາຍແຮ່ທາດ ຫຼື ຜະລິດຕະພັນແຮ່ທາດ, ສຳລັບແຮ່ທາດປະເພດໂລຫະ ທີ່ຈະສົ່ງອອກໄປຂາຍຕ່າງປະເທດຫຼືຂາຍຢູ່ພາຍໃນ ແມ່ນອີງຕາມລາຄາຊື້-ຂາຍຂອງຕະຫຼາດສາກົນ. ສ່ວນແຮ່ທາດປະເພດອະໂລຫະ ແມ່ນອີງໃສ່ລາຄາ ຊື້-ຂາຍຂອງຕະຫຼາດຂົງເຂດ ຫຼື ພາກພື້ນໃນມື້ຂາຍ ຫຼື ມື້ສົ່ງອອກ ເປັນບ່ອນອີງໃນການຄິດໄລ່ຄ່າຊັບພະຍາກອນແຮ່ທາດ ແລະ ຜະລິດຕະພັນແຮ່ທາດ.

ລາຄາຊື້-ຂາຍແຮ່ທາດ ຕ້ອງໄດ້ຮັບການຮັບຮອງ ຈາກກະຊວງພະລັງງານ ແລະ ບໍ່ແຮ່, ສ່ວນຄ່າຊັບພະຍາກອນແມ່ນຈະຖືກຄິດໄລ່ບົນພື້ນຖານ ສັນຍາ, ຂໍ້ຜູກພັນໃນສັນຍາ ແລະ ລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າຊັບພະຍາກອນແຮ່ທາດ.

ມາດຕາ 11. ການວິໄຈຕົວຢ່າງ

ຜູ້ໄດ້ຮັບສິດສຳປະທານ ຫຼື ຜູ້ຊື້-ຂາຍຜະລິດຕະພັນແຮ່ທາດ ສາມາດສົ່ງຕົວຢ່າງແຮ່ທາດ ໄປວິໄຈຢູ່ຫ້ອງວິໄຈ ທີ່ຖືກຮັບຮູ້ຢູ່ໃນລະດັບສາກົນ ແລະ ຕ້ອງເກັບຮັກສາຕົວຢ່າງ ໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະ ແບ່ງເອົາໜຶ່ງສ່ວນສີ່ ຂອງຕົວຢ່າງສົ່ງໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອຮັກສາໄວ້ກວດກາໃນເວລາຈຳເປັນ ໂດຍຄ່າໃຊ້ຈ່າຍທີ່ເກີດຂຶ້ນຕ້ອງເປັນຄວາມຮັບຜິດຊອບຂອງຜູ້ໄດ້ຮັບສິດສຳປະທານ ຫຼື ຜູ້ຊື້-ຂາຍ ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດທີ່ໄດ້ຮັບອະນຸຍາດ.

ມາດຕາ 12. ຄ່າທຳນຽມ

ການອອກ, ການຕໍ່ໃບອະນຸຍາດຊື້-ຂາຍແຮ່ ແລະ ໃບອະນຸຍາດເຄື່ອນຍ້າຍແຮ່ທາດ ຫຼື ຜະລິດຕະພັນແຮ່ທາດຕ້ອງໄດ້ຈ່າຍຄ່າທຳນຽມ ຕາມລັດຖະບັນຍັດຂອງປະທານປະເທດທີ່ປະກາດໃຊ້ໃນແຕ່ລະໄລຍະ.

ມາດຕາ 13. ການຈ່າຍຄ່າຊັບພະຍາກອນແຮ່ທາດ

ນິຕິບຸກຄົນທີ່ໄດ້ຮັບອະນຸຍາດຂຸດຄົ້ນ ພາຍໃຕ້ສັນຍາສຳປະທານ ຕ້ອງຈ່າຍຄ່າຊັບພະຍາກອນແຮ່ທາດ ຕາມກົດໝາຍກຳນົດ, ການຈ່າຍຄ່າຊັບພະຍາກອນແຮ່ທາດ ຕ້ອງຈ່າຍເປັນງວດ ໂດຍສອດຄ່ອງຕາມສັນຍາ ແລະ ຂໍ້ຜູກພັນໃນສັນຍາ. ສຳລັບຜູ້ດຳເນີນກິດຈະການຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຫຼື ການນຳເຂົ້າແຮ່ທາດມາປຸງແຕ່ງພາຍໃນ ຫຼື ສົ່ງອອກ ຕ້ອງໄດ້ປະຕິບັດພັນທະທາງດ້ານການເງິນຕາມລະບຽບກົດໝາຍ.

## ໝວດທີ III

## ການເຄື່ອນຍ້າຍ

### ມາດຕາ 14. ເງື່ອນໄຂ ການຂໍອະນຸຍາດເຄື່ອນຍ້າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງ ເຄື່ອນຍ້າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຕ້ອງໄດ້ຂໍໃບອະນຸຍາດຈາກກະຊວງພະລັງງານ ແລະ ບໍ່ແຮ່ ໂດຍຕ້ອງມີເງື່ອນໄຂດັ່ງນີ້:

1. ມີໃບອະນຸຍາດດຳເນີນກິດຈະການຊື້-ຂາຍສະເພາະແຮ່ (ສຳລັບຜູ້ບໍ່ມີເຂດສຳປະທານຂຸດຄົ້ນເປັນຂອງຕົນເອງ);
2. ມີແຜນການລະອຽດກ່ຽວກັບການຂົນສົ່ງໂດຍມີການຊີ້ໃຫ້ເຫັນປະເພດຍານພາຫະນະ, ເວລາ, ເສັ້ນທາງຂອງການຂົນສົ່ງ;
3. ມີຍານພາຫະນະທີ່ໄດ້ມາດຕະຖານທາງດ້ານເຕັກນິກ;
4. ມີສະຖານທີ່ ຫຼື ສາງເກັບມ້ຽນແຮ່ທາດທີ່ໄດ້ມາດຕະຖານທາງດ້ານເຕັກນິກ.

### ມາດຕາ 15. ການອອກໃບອະນຸຍາດເຄື່ອນຍ້າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ

ເມື່ອຜູ້ຍື່ນຄຳຮ້ອງ ຂໍອະນຸຍາດເຄື່ອນຍ້າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຍື່ນເອກະສານຄົບຖ້ວນແລ້ວ, ກະຊວງພະລັງງານ ແລະ ບໍ່ແຮ່ຈະພິຈາລະນາອອກໃບອະນຸຍາດ ໃຫ້ຜູ້ຍື່ນຄຳຮ້ອງບົນພື້ນຖານຄວາມຖືກຕ້ອງຂອງການປະກອບເອກະສານ ພາຍໃນ ສິບ ວັນລັດຖະການ.

ໃນກໍລະນີກະຊວງພະລັງງານ ແລະ ບໍ່ແຮ່ ຕົກລົງບໍ່ອອກໃບອະນຸຍາດໃຫ້ຜູ້ຍື່ນຄຳຮ້ອງ, ກໍ່ຕ້ອງຕອບຜູ້ຍື່ນຄຳຮ້ອງພ້ອມດ້ວຍເຫດຜົນຂອງການປະຕິເສດຢ່າງເປັນລາຍລັກອັກສອນ.

ໃບອະນຸຍາດດຳເນີນກິດຈະການເຄື່ອນຍ້າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ມີອາຍຸ ໜຶ່ງປີ ແລະ ສາມາດຕໍ່ໄດ້ເປັນແຕ່ລະປີ ຕາມເງື່ອນໄຂທີ່ໄດ້ກ່າວໄວ້ຂ້າງເທິງນີ້.

## ໝວດທີ IV

## ການຄຸ້ມຄອງ ແລະ ກວດກາໃບອະນຸຍາດ

### ມາດຕາ 16. ການຄຸ້ມຄອງ

ການ ຜູ້ຊື້-ຂາຍ ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດ ແມ່ນກິດຈະການຄຸ້ມຄອງ ຊຶ່ງມີແຕ່ຜູ້ໄດ້ຮັບໃບອະນຸຍາດເທົ່ານັ້ນມີສິດຜູ້ຊື້-ຂາຍ ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດໄດ້.

ກົມບໍ່ແຮ່ຂອງກະຊວງພະລັງງານ ແລະ ບໍ່ແຮ່ ແລະ ຂະແໜງບໍ່ແຮ່ ຂອງແຂວງ,ນະຄອນ ຫຼື ເມືອງເປັນຜູ້ຄຸ້ມຄອງ ແລະ ກວດກາການຈັດຕັ້ງປະຕິບັດເນື້ອໃນ ແລະ ເງື່ອນໄຂຂອງໃບອະນຸຍາດຜູ້ຊື້-ຂາຍ ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດ.

### ມາດຕາ 17. ຂໍ້ຫ້າມ

1. ຫ້າມບຸກຄົນ ຫຼື ນິຕິບຸກຄົນຊື້-ຂາຍ, ເຄື່ອນຍ້າຍແຮ່ທາດ ທີ່ມີຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ແຮ່ທາດກຳມະຕະພາບລັງສີ, ແຮ່ທາດທີ່ເປັນທາດເບື່ອ ແລະ ແຮ່ທາດທີ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງພະລັງງານ ແລະ ບໍ່ແຮ່;

2. ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງພະລັງງານ ແລະ ບໍ່ແຮ່;
3. ຫ້າມບໍ່ໃຫ້ຜູ້ອື່ນນຳໃຊ້ໃບອະນຸຍາດຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ດຳເນີນການຊື້-ຂາຍປະເພດແຮ່ທາດທີ່ບໍ່ໄດ້ຮັບອະນຸຍາດ;
4. ຫ້າມບໍ່ໃຫ້ໂອນ ຫຼື ຈຳນອງ ໃບອະນຸຍາດຊື້-ຂາຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ;
5. ຫ້າມບໍ່ໃຫ້ເກັບຊື້ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຈາກປະຊາຊົນ ຫຼື ການຂຸດຄົ້ນທີ່ບໍ່ຖືກຕ້ອງຕາມກົດໝາຍ.

## ໝວດທີ V
## ການຖອນໃບອະນຸຍາດ

### ມາດຕາ 18. ການຖອນໃບອະນຸຍາດ

ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ຮັບໃບອະນຸຍາດຊື້-ຂາຍ ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດ ຈະຖືກຖອນໃບອະນຸຍາດ ຖ້າວ່າ ລະເມີດເງື່ອນໄຂຂອງໃບອະນຸຍາດຂັ້ນຮ້າຍແຮງ ແລະ/ຫຼື ລະເມີດຂໍ້ຫ້າມທີ່ກຳນົດໄວ້ ໃນມາດຕາ 17 ຂ້າງເທິງນີ້.

### ມາດຕາ 19. ມາດຕະການເພີ່ມ

ນອກຈາກການຖອນໃບອະນຸຍາດຕາມທີ່ກຳນົດໄວ້ໃນມາດຕາ 18 ຂ້າງເທິງນີ້ແລ້ວ ຜູ້ຖືກຖອນໃບອະນຸຍາດຕ້ອງຖືກດຳເນີນການທາງດ້ານບໍລິຫານ ຫຼື ທາງດ້ານກົດໝາຍ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

### ມາດຕາ 20. ການຈັດຕັ້ງປະຕິບັດ

ມອບໃຫ້ກົມບໍ່ແຮ່ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ນຳໄປເຜີຍແຜ່ ແລະ ປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

ອົງການຈັດຕັ້ງຂັ້ນຕ່າງໆ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 21. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ບັນດາຂໍ້ກຳນົດ ແລະ ກົດລະບຽບອື່ນໆ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່

ສຸລິວົງ ດາລາວົງ